ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*** ♣ ***

ພະແນກຊັບພະຍາກອນທຳມະຊາດ ເລກທີ 2585/ພຊສ-ຫຼບ

ແລະ ສິ່ງແວດລ້ອມແຂວງ ຫລວງພະບາງ,ວັນທີ 22 NOV 2018

## ໃບຢັ້ງຢືນ

- ອີງຕາມ: ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 29/ສພຊ,ລົງວັນທີ 18/12/2012.
- ອີງຕາມ: ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກ ທີ 3171/ກຊສ, ລົງວັນທີ 01 ສິງຫາ 2017.
- ອີງຕາມ: ດຳລັດ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍຈັດສັນປະຊາຊົນ ຈາກໂຄງການພັດທະນາ, ສະບັບເລກທີ 84/ນຍ, ລົງວັນທີ 05 ເມສາ 2016 .
- ອີງຕາມ: ດຳລັດວ່າດ້ວຍ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ສະບັບເລກທີ 112/ນຍ ລົງວັນທີ 16 ກຸມພາ 2010.

**ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ( ພຊສ ) ຕົກລົງອອກ**

**ໃບຢັ້ງຢືນດ້ານສິ່ງແວດລ້ອມໂຄງການ ຂະຫຍາຍນ້ຳປະປາ ນະຄອນຫຼວງພະບາງ, ຂອງພະແນກໂຍທາທິການ ແລະ ຂົນສົ່ງ ເລີ້ມແຕ່ 22 ພະຈິກ (11) 2018 ຫາວັນທີ 22 ພະຈິກ (11) 2020.**

1. ເຫັນດີ ຕໍ່ ໃບຢັ້ງຢືນ ຮັບຮອງ ເອົາບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ແຜນການຄຸ້ມຄອງ ແລະ ຕິດຕາມກວດສິ່ງແວດລ້ອມເດືອນ ພະຈິກ (11) 2018.ໂຄງການ ຂະຫຍາຍນ້ຳປະປາ ນະຄອນຫຼວງພະບາງ,ແຂວງຫຼວງພະບາງ, ຂອງພະແນກໂຍທາທິການ ແລະ ຂົນສົ່ງ, ໂດຍເຈົ້າຂອງໂຄງການປະຕິບັດຕາມເງື່ອນໄຂດັ່ງນີ້:

ກ). ຮັບຜິດຊອບໂດຍກົງ ຕໍ່ ການສຶກສາ ແລະ ຂໍ້ມູນ ທີ່ໄດ້ລະບຸໄວ້ ໃນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ທີ່ໄດ້ກຳນົດໄວ້ໃນບັນດາເອກະສານດັ່ງກ່າວ.

ຂ).ໃນກໍລະນີ ມີບັນຫາທາງດ້ານສິ່ງແວດລ້ອມ ແລະ ສັງຄົມເກີດຂຶ້ນ ທີ່ບໍ່ໄດ້ກຳນົດໄວ້ໃນບົດລາຍງານດັ່ງກ່າວເຈົ້າຂອງໂຄງການຈະຕ້ອງໄດ້ຮັບຜິດຊອບເພີ່ມເຕີມ ໃນການສ້າງແຜນການຄຸ້ມຄອງສິ່ງແວດລ້ອມ- ສັງຄົມພ້ອມທັງມີມາດຕະ ການແກ້ໄຂບັນຫາເຫຼົ່ານັ້ນ ແລະ ຮັບປະກັນ ໃຫ້ງົບປະມານພຽງພໍ ໃນການຈັດຕັ້ງປະຕິບັດແຜນການດັ່ງກ່າວ.

ຄ).ໃຫ້ປະຕິບັດແຜນຄຸ້ມຄອງສິ່ງແວດລ້ອມ ແລະ ຕິດຕາມກວດກາສິ່ງແວດລ້ອມ ແລະ ພັນທະທາງດ້ານສິ່ງແວດລ້ອມ ຂອງສັນຍາສຳປະທານຢ່າງເຄັ່ງຄັດ.

ງ). ໃນໄລຍະການກໍ່ສ້າງ ແລະ ດຳເນີນງານ ຂອງໂຄງການ ຕ້ອງເອົາໃຈໃສ່ເປັນພິເສດ ຕໍ່ກັບບັນຫາການເຊາະເຈື່ອນ, ຄຸນນະພາບນ້ຳ, ການບຳບັດນ້ຳເປື້ອນ, ການນຳໃຊ້ສານເຄມີໃນຂົງເຂດໂຄງການ ໂດຍໃຫ້ສອດຄ່ອງກັບມາດຕະຖານເຕັກນິກ ດ້ານສິ່ງແວດລ້ອມແຫ່ງຊາດ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມໃຫ້ໜ້ອຍທີ່ສຸດ.

ຈ). ເຮັດບົດລາຍງານປະຈຳເດືອນ,ປະຈຳໄຕມາດ ແລະ ປະຈຳປີ ກ່ຽວກັບການຕິດຕາມ ກວດກາ,ການຈັດຕັ້ງປະຕິບັດແຜນຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມໂຄງການສົ່ງໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກ ຊສ ແຂວງຫຼວງພະບາງ ເພື່ອຊາບ ແລະ ຕິດຕາມກວດກາ.

2.ມອບໃຫ້ຂະແໜງສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດແຂວງຫຼວງພະບາງສົມທົບກັບ ຂະແໜງການທີ່ກ່ຽວຂ້ອງແລະອຳນາດການປົກຄອງ ເມືອງ, ບ້ານ ທີ່ກ່ຽວຂ້ອງ ເຮັດ ໜ້າທີ່ຕິດຕາມກວດກາສິ່ງແວດລ້ອມແລ້ວລາຍງານໃຫ້ການນຳແຂວງ ຫຼວງພະບາງ

3.ໃບຢັ້ງຢືນສະບັບນີ້ ມີຜົນນຳໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງຫຼວງພະບາງ

ຫົວໜ້າພະແນກ

ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງຫຼວງພະບາງ

ຈັນທະວົງ ພົມມະຈັກ

ໝາຍເຫດ:

1. ຫ້າມບໍ່ໃຫ້ນໍາເອົາໃບຢັ້ງຢືນນີ້ ໃຫ້ຄົນອື່ນຢືມ, ຫຼື ປອມແປງ ແລະ ຂາຍສິດໃນການນໍາໃຊ້ໃບຢັ້ງຢືນສະບັບນີ້ ຫຼື ການກະທໍາຢ່າງອື່ນທີ່ເປັນການຜິດກົດໝາຍຂອງ ສປປ ລາວ.
2. ຕ້ອງເອົາໃຈໃສ່ປະຕິບັດຢ່າງເຂັ້ມງວດ ຄໍາສັ່ງຂອງທ່ານ ນາຍົກລັດຖະມົນຕີ, ເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012, ວ່າດ້ວຍການໂຈະການພິຈາລະນາ ແລະ ອານຸຍາດໂຄງການລົງທຶນ.
3. ຖ້າອາຍຸໃບຢັ້ງຢືນໃກ້ຈະໝົດກໍານົດ ຕ້ອງໄດ້ຂໍຕໍ່ໃຫ້ທັນເວລາ, ຖ້າບໍ່ຂໍຕໍ່ຄືນໃຫ້ທັນເວລາ ແມ່ນ ຖືວ່າທຸລະກິດດັ່ງກ່າວໄດ້ຢຸດການເຄື່ອນໄຫວ ແລະ ໃບຢັ້ງຢືນດັ່ງກ່າວກໍ່ຖືວ່າໝົດອາຍຸການນໍາໃຊ້ຕາມທີ່ໄດ້ກໍານົດໄວ້.